# 5 ເຄັດລັບຄວາມປອດທາງອິນເຕີເນັດສຳລັບທຸກຄົນ!



FOR EVERYONE!

# ຄວາມສ່ຽງທາງອອນລາຍ

ອິນເຕີເນັດໄດ້ນຳຂໍ້ມູນທົ່ວໂລກທີ່ຫຼາກຫຼາຍມາໄວ້ເທິງປາຍນິ້ວມືຂອງເຮົາ, ແຕ່ມັນກໍ່ມີຄວາມສຽງເຊັ່ນກັນ. ຖ້າເຈົ້າບໍ່ລະມັດລະວັງໃນການໃຊ້ອິນເຕີເນັດ, ເຈົ້າອາດພົບກັບຄວາມສ່ຽງຕ່າງໆເຊັ່ນ: ການຂົ່ມເຫັງທາງໄຊເບີ, ການລັກຂໍ້ມູນສ່ວນຕົວ, ການຫຼອກລວງ, ແລະ ແຮັກເກີ ທີ່ພະຍາຍາມລັກເອົາຂໍ້ມູນຂອງເຈົ້າ.

ເວັບໄຊປອມ, ອີເມວຫຼອກລວງ, ແລະ ເຊື່ອມຕໍ່ທີ່ເປັນຕາໜ້າສົງໃສ ອາດຈະຕົວະໃຫ້ເຈົ້າໃສ່ລະຫັດຜ່ານ ຫຼື ດາວໂຫຼດໄວຣັດທີ່ອັນຕະລາຍ.



ເບິ່ງເຄັດລັບຕໍ່ໄປນີ້ເພື່ອຄວາມປອດໄພທາງອອນໄລນ໌.

1

# ຢ່າໃຫ້ຂໍ້ມູນສ່ວນຕົວ

ຫຼີກເວັ້ນການຫຼອກລວງທາງອອນລາຍໂດຍການປົກປ້ອງຂໍ້ມູນສ່ວນຕົວຂອງເຈົ້າ. ຢ່າໃຫ້ເບີໂທ, ທີ່ຢູ່, ລະຫັດຜ່ານ ຫຼື ຂໍ້ມູນທາງການເງິນແກ່ຜູ້ທີ່ເຈົ້າບໍ່ຮູ້ຈັກ.

**ການຫຼອກລວງທາງອິນເຕີເນັດ: ເປັນການຫຼອກລວງທີ່ນັກອາຊະຍາກຳພະຍາຍາມຕົວະໃຫ້ເຈົ້າ ເປີດເຜີຍຂໍ້ມູນສ່ວນຕົວ. ຂໍ້ຄວາມອາດບອກວ່າບັນຊີຂອງເຈົ້າມີບັນຫາ ຫຼື ເຈົ້າຖືກລາງວັນ, ແລະ ຈູງໃຈໃຫ້ເຈົ້າກົດເຊື່ອມຕໍ່ ຫຼື ປ້ອນຂໍ້ມູນຂອງເຈົ້າ.



2

## ຄິດກ່ອນກົດ

ຄິດໃຫ້ດີກ່ອນທີ່ຈະກົດເຊື່ອມຕໍ່ໃນເວັບໄຊ ຫຼື ອີເມວທີ່ເຈົ້າບໍ່ຮູ້ຈັກ. ເວັບໄຊບາງອັນອາດໃຊ້ແບບທົດສອບ, ລາງວັນໃຫ້ລ້າໆ ຫຼື ຂ່າວທີ່ຕື່ນເຕັ້ນເພື່ອຈູງໃຈໃຫ້ເຈົ້າກົດ ແລະ ຈະແຮ໊ກ ຫຼື ລັກຂໍ້ມູນສ່ວນຕົວຂອງເຈົ້າ.



3

# ຮູ້ຈັກເພື່ອນໃນອອນລາຍຂອງເຈົ້າ

ເຈົ້າຮູ້ບໍ່ວ່າເພື່ອນໃນສື່ສັງຄົມອອນລາຍຂອງເຈົ້າເຫຼົ່ານັ້ນແມ່ນໃຜ? ຢ່າ ຕອບຮັບຄຳເຊີນຈາກຄົນທີ່ເຈົ້າບໍ່ຮູ້ຈັກ.






# 4

## ໃຊ້ເວັບໄຊທີ່ປອດໄພ

ກ່ອນທີ່ຈະຊື້ສິນຄ້າ ຫຼື ບໍລິການໃນເວັບໄຊ, ໃຫ້ແນ່ໃຈວ່າມັນປອດໄພ ໂດຍສາມາດກວດເບິ່ງໄດ້ໂດຍຫາໄອຄອນກະແຈນ້ອຍ ຫຼື “https” ກ່ອນໜ້າ URL ຕົວອັກສອນເຫຼົ່ານີ້ໝາຍຄວາມວ່າເວັບໄຊນັ້ນໄດ້ຮັບການຢືນຢັນຄວາມປອດໄພໂດຍ browser ບຣາວເຊີຂອງເຈົ້າ



# ການບຣ໋ອກ ແລະ ລາຍງານການຂົ່ມເຫັງທາງໄຊເບີ

5

ການຂົ່ມເຫັງທາງໄຊເບີແມ່ນເມື່ອມີຄົນໃຊ້ອິນເຕີເນັດ, ສື່ສັງຄົມອອນລາຍ ຫຼື ແອັບແຊດ ເພື່ອຄຸກຄາມ , ຂົ່ມຂູ່ ຫຼື ທຳໃຫ້ຄົນອື່ນອັບອາຍ. ມັນສາມາດເກີດຂຶ້ນໃນລັກສະນະຂອງຄຳໃສ່ຮ້າຍ, ການເຜີຍແຜ່ຂ່າວລື ຫຼື ການແບ່ງປັນຮູບພາບໂດຍບໍ່ມີການອະນຸຍາດ.



**ຖ້າເຈົ້າເປັນເຫຍື່ອ, ຢ່າຕອບໂຕ້ຄົນທີ່ຂົ່ມເຫັງ.**

- ໃຫ້ບຣ໋ອກ ຫຼື ລາຍງານ ພວກນັ້ນໃນແພລດຟອມທີ່ເຫດການເກີດຂຶ້ນ.
- ບັນທຶກຮູບພາບໜ້າຈໍໄວ້ເປັນຫຼັກຖານ ແລະ ຂໍຄວາມຊ່ວຍເຫຼືອຈາກຄົນທີ່ເຈົ້າໄວ້ວາງໃຈ.
- ຖ້າຫາກການຂົ່ມເຫັງນັ້ນກາຍເປັນເລື່ອງຮຸນແຮງ ເຊັ່ນ ຂູ່ວ່າຈະໃຊ້ຄວາມຮຸນແຮງ... ເຈົ້າອາດຕ້ອງແຈ້ງລາຍງານເຈົ້າໜ້າທີ່ຢູ່ໃນທ້ອງຖິ່ນ.